ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 10 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 17 ຕຸລາ 2017

ສຳນັກງານ ຄຄຊ
ເລກ ...1156......
ວັນທີ 19 OCT 2017
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ກັນຍາ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ກັນຍາ 2017 ແລະ ທິດທາງແຜນການໃນເດືອນ ສິງຫາ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມສູນກາງພັກ ຄັ້ງທີ 5 ສະໄໝທີ X; ກອງປະຊຸມລັດຖະບານເປີດກວ້າງກາງປີ ໃນ ເດືອນ ກັນຍາ 2017; ກອງປະຊຸມນາຍົກ-ຮອງນາຍົກ ປະຈຳເດືອນ ກັນຍາ 2017; ກອງປະຊຸມປຶກສາຫາລືກ່ຽວກັບການຕີລາຄາຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2017 ແລະ ທິດທາງສຳລັບ ປີ 2018; ກອງປະຊຸມຮ່ວມກັບຄະນະປະຈຳສະພາແຫ່ງຊາດສະໄໝສາມັນ ເພື່ອລາຍງານການຈັດຕັ້ງປະຕິບັດແຜນເງິນຕາ ປີ 2017 ແລະ ແຜນການ ປີ 2018; ເຂົ້າຮ່ວມພິທີໂຮມຊຸມນຸມສະເຫຼີມສະຫຼອງ 2 ວັນປະຫວັດສາດລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2017; ຕິດຕາມຄະນະທ່ານ ນາຍົກລັດຖະມົນຕີ ເດີນທາງໄປຢ້ຽມຢາມ ປະເທດ ລັດເຊຍ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ; ກອງປະຊຸມປຶກສາຫາລືກ່ຽວກັບແຜນເງິນຕາ ປະຈຳປີ 2017 ແລະ ທິດທາງຜນການປະຈຳປີ 2018; ກອງປະຊຸມການປະເມີນຄວາມສ່ຽງລະດັບຊາດກ່ຽວກັບວຽກງານຕ້ານການຟອກເງິນ; ກອງປະຊຸມກວດກາເນື້ອໃນຮ່າງກົດໝາຍວ່າດ້ວຍລະບົບການຊໍາລະຮ່ວມກັບສະພາແຫ່ງຊາດ; ກອງປະຊຸມຄົບຄະນະຮັບຜິດຊອບພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ II; ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານຢູ່ຂະແໜງ ການທະນາຄານ; ກອງປະຊຸມຄະນະປັບປຸງຄວາມເຂັ້ມແຂງຕະຫຼາດທຶນລາວ;
- ສຳເລັດການຈັດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ: "ການຄຸ້ມຄອງ ແລະ ກວດກາທາງດ້ານບັນຊີຂອງ ທຫລ, ທະນາຄານທຸລະກິດ ແລະ ສະຖາບັນການເງິນ"; "ວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ ສຳລັບທະນາຄານ"; "ການຈັດຕັ້ງປະຕິບັດ ບາເຊວ 2 ແລະ ການບໍລິຫານຄວາມສ່ຽງ"; ແລະ ຈັດຝຶກອົບຮົມໃນຫົວຂໍ້ "ກົນໄກຂໍ້ລິເລີ່ມຫຼາຍຝ່າຍກ່ຽວກັບການປ້ອງກັນວິກິດການ (CMIM) ແລະ ຂັ້ນຕອນການຈັດຕັ້ງປະຕິບັດ";

- ສຳເລັດການຈັດຕັ້ງພິທີ ແລະ ເຂົ້າຮ່ວມພິທີຕ່າງໆ: ຈັດພິທີມອບ-ຮັບໃບຍັ້ງຢືນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2016; ຈັດປະຖະກະຖາວັນສ້າງຕັ້ງອາຊຽນຄົບຮອບ 50 ປີ, ວັນເຊັນສົນຍາມິດຕະພາບການຮ່ວມມືລາວ-ຫວຽດນາມ ຄົບຮອບ 40 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມຄົບຮອບ 55 ປີ; ການເປີດຮຽນທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ 45 ວັນ ປະຈຳປີ 2017; ສຳເລັດຈັດການແຂ່ງຂັນກິລາ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 49 ປີ;

- ສຳເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນຳ ທຫລ ມີ ຄະນະຊ່ຽວຊານຈາກກຸ່ມທະນາຄານໂລກ; ຄະນະຈາກທະນາຄານພັດທະນາແຫ່ງຊາດຈີນ.

## III. ສະພາບພື້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 9/2017, ສະພາບເສດຖະກິດໂລກສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີການຟື້ນຕົວທີ່ແຕກຕ່າງກັນໃນແຕ່ລະຂົງເຂດ. ເຖິງແມ່ນວ່າການພັດທະນາທາງເສດຖະກິດຂອງບັນດາປະເທດສ່ວນໃຫຍ່ ແມ່ນຍັງສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍຢ່າງກໍ່ຕາມ, ແຕ່ມູນຄ່າການຄ້າລະຫວ່າງປະເທດແມ່ນຍັງມີທ່າອ່ຽງເພີ່ມຂຶ້ນ ຊຶ່ງຊີ້ໃຫ້ເຫັນເຖິງຄວາມຕ້ອງ ການທາງດ້ານການຊົມໃຊ້ ແລະ ການລົງທຶນຟື້ນຕົວດີຂຶ້ນ ໂດຍສະເພາະຕົວເລກການນຳເຂົ້າ 7 ເດືອນໃນປີ 2017 ຂອງ ສ.ອາເມລິກາ ຂະຫຍາຍຕົວ 5,6%, ຍີ່ປຸ່ນ 6,5% ແລະ ສະຫະພາບເອີຣົບ 4,6%. ໃນຂະນະທີ່, ມູນຄ່າການຄ້າຂອງບັນດາປະເທດໃນຂົງເຂດອາຊີຕາເວັນອອກ ກຳລັງມີທ່າອ່ຽງເພີ່ມຂຶ້ນ ເປັນຕົ້ນ ສ.ເກົາຫຼີ, ສປ.ຈີນ, ມາເລເຊຍ, ຟີລິປີນ, ສິງກະໂປ ແລະ ໄທ. ພ້ອມນີ້, ອັດຕາເງິນເຟີ້ຂອງບັນດາປະເທດໃນເດືອນ 8/2017 ສືບຕໍ່ຢູ່ໃນລະດັບຕໍ່າ ແລະ ຕໍ່າກວ່າເປົ້າໝາຍເງິນເຟີ້ຂອງຕົນ ເຊັ່ນ: ປະເທດມາເລເຊຍ, ບຣາຊິວ, ອິນເດຍ ແລະ ໄທ;

- ສຳລັບອັດຕາແລກປ່ຽນ: ເງິນໂດລາອ່ອນຄ່າ 1,45% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີເປັນຕົ້ນຕົວເລກຍອດຂາຍບ້ານໃໝ່ ຫຼຸດລົງ 9,40% ຂອງເດືອນ 07/2017 ຈາກເພີ່ມຂຶ້ນ 1,90% ໃນເດືອນຜ່ານມາ, ຍອດການສັ່ງຊື້ສິນຄ້າທີ່ມີຄວາມທົນທານ ຫຼຸດລົງ 6,80% ຂອງເດືອນ 07/2017 ຈາກເພີ່ມຂຶ້ນ 6,40% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ດຸນການຄ້າຂາດດຸນເປັນ 65,1 ຕື້ໂດລາສະຫະລັດ ຂອງເດືອນ 07/2017 ຈາກຂາດດຸນ 64 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ ແລະ ຍອດຂາຍບ້ານໃໝ່ທີ່ກຳລັງກໍ່ສ້າງ ຫຼຸດລົງ 0,50% ຂອງເດືອນ 07/2017 ຈາກເພີ່ມຂຶ້ນ 0,40% ໃນເດືອນຜ່ານມາ;

- ສ່ວນລາຄານ້ຳມັນ ເພີ່ມຂຶ້ນ 0,40% ຈາກ 48,45 ໂດລາ/ບາເຣວ ມາເປັນ 48,64 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບ ຂອງ ສ.ອາເມລິກາ ຫຼຸດລົງ 5,39 ລ້ານບາເຣວ ຂອງອາທິດທີ 25/08/2017, ຈາກຫຼຸດລົງ3,33 ລ້ານບາເຣວໃນອາທິດຜ່ານມາ. ພ້ອມກັນນັ້ນ, ພາຍຸຮາເວໃນອ່າວແມັກຊິໂກ ໄດ້ສົ່ງຜົນໃຫ້ໂຮງກັ່ນນ້ຳມັນດິບບາງແຫ່ງໃນ ສ.ອາເມລິກາ ຢຸດການດຳເນີນງານ, ເຊິ່ງໂຮງກັ່ນນ້ຳມັນດິບດັ່ງກ່າວ ມີກຳລັງການຜະລິດຫຼາຍກວ່າ 4,4 ລ້ານບາເຣວ/ວັນ ກວມ 24% ຂອງກຳລັງການຜະລິດຂອງໂຮງກັ່ນນ້ຳມັນດິບທັງໝົດໃນ ສ.ອາເມລິກາ. ໃນດ້ານລາຄາຄຳ ເພີ່ມຂຶ້ນ 3,92% ຈາກ 1.255,81 ໂດລາ/ອອນ ມາເປັນ 1.305,06 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ 11,23 ໂຕນ ເປັນ 816,43 ໂຕນ ໃນວັນທີ 29/08/2017 ຈາກ 805,20 ໂຕນໃນວັນທີ 25/08/2017.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 09/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,32% ເພີ່ມຂຶ້ນຈາກ 0,16% ໃນເດືອນ 08/2017;

– ຖານເງິນຕາປະຈຳເດືອນ 09/2017 ເພີ່ມຂຶ້ນ 284,80 ຕື້ກີບ ຫຼື 0,75% ທຽບໃສ່ເດືອນ 08/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,20%. ປະລິມານເງິນ M2 ເພີ່ມຂຶ້ນ 585,43 ຕື້ກີບ ຫຼື 0,77% ທຽບໃສ່ເດືອນ 08/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.666,35 ຕື້ກີບ ຫຼື 12,81%;

– ອັດຕາແລກປ່ຽນທົ່ວລະບົບໃນເດືອນ 9/2017 ທຽບເດືອນ 8/2017 ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,40% ທຽບເງິນໂດລາ ແລະ ອ່ອນຄ່າ 0,58% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາ ເຫັນວ່າເງິນກີບອ່ອນຄ່າ 0,16% ທຽບກັບເງິນໂດລາ ແລະ ອ່ອນຄ່າ 7,07% ທຽບເງິນບາດ;

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 09/2017 (12/08-12/09/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 12,93% ຖ້າທຽບໃສ່ເດືອນ 08/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 66,68 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນບາດສຸດທິ 4.382,27 ລ້ານບາດ ຫຼື 136,05 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ເງິນໂດລາສຸດທິ 69,37 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 50,44 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 42,82 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 245,30 ລ້ານບາດ ຫຼື 7,62 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 25,69 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 15,72 ລ້ານໂດລາສະຫະລັດ ແລະ ເງິນບາດ 321,14 ລ້ານບາດ ຫຼື 9,97 ລ້ານໂດລາສະຫະລັດ);

– ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 09/2017 (12/08-13/09/2017) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 112,4 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 841,22 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງວິສາຫະກິດ ຈຳນວນ 452,54 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 164,39 ລ້ານໂດລາສະຫະລັດ, ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 728,82 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າຂອງວິສາຫະກິດຈຳນວນ 185,53 ລ້ານໂດລາສະຫະລັດ, ທະນາຄານທຸລະກິດ ຝາກນຳ ທຫລ ຈຳນວນ 225 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/09/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 66.434,68 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,80%. ເງິນຝາກເປັນເງິນກີບເພີ່ມຂຶ້ນ 1,09% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,34% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,54% ຊຶ່ງກວມເອົາ 52,66% ຂອງເງິນຝາກທັງໝົດ.

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/09/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 64.602,72 ຕື້ກີບ ເພີ່ມຂຶ້ນ 0,95% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບ ກວມເອົາ 49,75% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 50,25% ຂອງສິນເຊື່ອທັງໝົດ.

– ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 89,22 ຕື້ກີບ ທຽບໃສ່ເດືອນຜ່ານມາເພີ່ມຂຶ້ນ 62%, ເກັບຕົ້ນທຶນໄດ້ 28,39 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 10% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 09/2017 ມີຈຳນວນ 3.167,49 ຕື້ກີບ ເທົ່າກັບ 95,16% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.114,46 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 326,98 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 294,51 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,54 ຕື້ກີບ.

4. <u>ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ</u>

**4.1.** <u>ການເຄື່ອນໄຫວຊຳລະສະສາງ</u>

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 3.446 ສະບັບ ຫຼຸດລົງ 11,51% ເປັນເງິນຈຳນວນ 1.644,24 ຕື້ກີບ ຫຼຸດລົງ 2[illegible].14% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີ

ມູນຄ່າສູງໃນເດືອນນີ້ມີຈຳນວນ 184 ຄັ້ງ ເພີ່ມຂຶ້ນ 16,46% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 815,73 ຕື້ກີບ ຫຼຸດລົງ 19,76% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/08-24/09/2017 ມີຈຳນວນ 13.907 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈຳນວນ 13.492 ຄັ້ງ ມີມູນຄ່າການໂອນ 4.100,34 ຕື້ກີບ ເພີ່ມຂຶ້ນ 1,56% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 3.877 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກຳ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 413 ຄັ້ງ ມີມູນຄ່າການໂອນ 547,90 ຕື້ກີບ ຫຼຸດລົງ 2,61%;

– **ສະກຸນເງິນໂດລາສະຫະລັດ:** ມີການເຄື່ອນໄຫວ ຈຳນວນ 2 ຄັ້ງ ມີມູນຄ່າການໂອນ 80.000 ໂດລາ.

### 4.2 ການຊື້-ຂາຍພັນທະບັດ

– ໃນເດືອນ 09/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ 125 ຕື້ກີບ ຊຶ່ງປະກອບດ້ວຍ: ບໍລິສັດຫວຍພັດທະນາ 5 ຕື້ກີບ, ກອງທຶນປະກັນສັງຄົມແຫ່ງຊາດ 45 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 25 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 50 ຕື້ກີບ. ພ້ອມດຽວກັນນັ້ນ, ກໍ່ໄດ້ໄຖ່ຖອນພັນທະບັດຄືນໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 50 ຕື້ກີບ;

– ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.791 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.959 ຕື້ກີບ);

– ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 09/2017 ບໍ່ມີການຈຳໜ່າຍພັນທະບັດ ທຫລ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.028,64 ຈຸດ ເພີ່ມຂຶ້ນ 0,69% ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍຮຸ້ນທັງໝົດ 1.911.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 12,11 ຕື້ກີບ ເພີ່ມຂຶ້ນ 171,93% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 39,09% ຂອງມູນຄ່າການຊື້-ຂາຍທັງໝົດ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.248 ກີບ/ຮຸ້ນ ຫຼຸດລົງ 62 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 614.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,22 ຕື້ກີບ ຫຼຸດລົງ 10,01% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 14,64% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.067 ກີບ/ຮຸ້ນ ຫຼຸດລົງ 60 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 286.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,44 ຕື້ກີບ ເພີ່ມຂຶ້ນ 94,93% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 81,66% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.398 ກີບ/ຮຸ້ນ ຫຼຸດລົງ 186 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.003.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,42 ຕື້ກີບ ເພີ່ມຂຶ້ນ 163.052,00% ເມື່ອທຽບໃສ່ເດືອນຜ່ານມາ ເນື່ອງຈາກນັກລົງທຶນຕ່າງປະເທດລາຍຍ່ອຍເທຂາຍຮຸ້ນ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 18,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 1.923 ກີບ/ຮຸ້ນ ຫຼຸດລົງ 77 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 9,42 ລ້ານກີບ ເພີ່ມຂຶ້ນ 114,20% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 37,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.968 ກີບ/ຮຸ້ນ ເພີ່ມຂຶ້ນ 63 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,53 ລ້ານກີບ ຫຼຸດລົງ 94,46% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ.

6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນໍາເງິນເຂົ້າ ສປປ ລາວ ຈໍານວນ 388,3 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 7% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈໍານວນ 289,6 ລ້ານໂດລາສະຫະລັດ ກວມເອົາ 62% ຂອງເງິນທັງໝົດ, ເງິນບາດ 3,23 ຕື້ບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນໍາເງິນຕາຕ່າງປະເທດອອກນອກ ສປປ ລາວ ຈໍານວນ 630,89 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 21% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈໍານວນ 572,01 ລ້ານໂດລາສະຫະລັດ ກວມເອົາ 91% ຂອງເງິນທັງໝົດ, ເງິນບາດ 1,92 ຕື້ບາດ, 80.930 ເອີໂຣ, 22.170 ຝຣັ່ງສະວິດ, 9.515 ປອນສະເຕີລິງ, 13,79 ລ້ານເຢັນ, 59.640 ໂດລາແຄນນາດາ, 0,82 ໂດລາອົດສະຕາລີ ແລະ 4.000 ໂດລານິວຊີແລນ ແລະ 1.000 ໂດລາສິງກະໂປ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສໍາເລັດການອອກໃບອະນຸຍາດສ້າງຕັ້ງໜ່ວຍບໍລິການ (ສະບັບປັບປຸງ) ໃຫ້ທະນາຄານນະໂຍບາຍ ຈໍານວນ 30 ໜ່ວຍບໍລິການ; ສໍາເລັດການອອກຂໍ້ຕົກລົງວ່າດ້ວຍການຮັບຮອງລະບຽບພາຍໃນຂອງທະນາຄານຮ່ວມທຸລະກິດລາວ-ຫວຽດ; ສໍາເລັດການລົງກວດກາທະນາຄານທຸລະກິດ 4 ແຫ່ງ ປະຈໍາປີ 2016 ຄື: ທະນາຄານຫຸ້ນສ່ວນການຄ້າທະຫານ ສາຂາລາວ, ທະນາຄານແຫ່ງປະເທດ ຈີນ ຈໍາກັດ ສາຂານະຄອນຫຼວງວຽງຈັນ, ທະນາຄານໄຊງ່ອນ-ຮ່າໂນ້ຍ ລາວ ຈໍາກັດ ແລະ ທະນາຄານ ລາວຈີນ ຈໍາກັດ; ສໍາເລັດພິທີມອບ-ຮັບໃບອະນຸຍາດດໍາເນີນທຸລະກິດຊົ່ວຄາວຂອງ ສກຈບ ສົມຫວັງທັນໃຈ;

– ສໍາເລັດບົດລາຍງານຕ່າງໆຄື: ການປະເມີນນະໂຍບາຍການຄຸ້ມຄອງອັດຕາດອກເບ້ຍຂອງທະນາຄານທຸລະກິດປະຈໍາປີ 2016 ແລະ ແຜນການປີ 2017;

– ໄດ້ຮັບທະນະບັດປອມ ປະເພດໃບ 50.000 ກີບ ຈໍານວນ 01 ໃບ ຈາກທະນາຄານທຸລະກິດ;

– ໄດ້ຮັບສໍານວນທຸລະກໍາທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈໍານວນ 31 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 640 ສະບັບ.

## ພາກທີ II
## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກໍານົດໄວ້ໃນແຜນງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊໍາລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກໍານົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສໍາຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກໍານົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນໍາໃຊ້ເງິນກີບ ແລະ ການຊໍາລະໂດຍບໍ່ໃຊ້ເງິນສົດ, ເກັບກໍາສະພາບການຄິດໄລ່ລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ ແລະ ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້; ຄຳແນະນຳກ່ຽວກັບຕົວຊີ້ບອກຂອງທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ; ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ;

– ກະກຽມລາຍງານການຈັດຕັ້ງປະຕິບັດແຜນເງິນຕາ ແລະ ທິດທາງແຜນການ ປະຈຳປີ 2018 ແລະ ຜ່ານຮ່າງກົດໝາຍວ່າດ້ວຍລະບົບຊຳລະ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII;

– ກະກຽມເງື່ອນໄຂຕ່າງໆ ໃຫ້ແກ່ການຈັດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ປະຈຳປີ 2017;

– ກະກຽມຄວາມພ້ອມໃນການຈັດກອງປະຊຸມ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

– ກະກຽມຈັດກອງປະຊຸມຂອງຄະນະສະເພາະກິດ ເພື່ອແກ້ໄຂບັນຫາບໍລິສັດພີເອັສ ສິ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ ຂາອອກ-ຂາເຂົ້າ;

– ກະກຽມຈັດກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (SLC) ຄັ້ງທີ 14 ແລະ ກອງປະຊຸມຄະນະກຳມະການວຽກງານເສີມສ້າງຄວາມສາມາດ (SCCB) ຄັ້ງທີ 13 ຢູ່ແຂວງຫຼວງພະບາງ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ

<u>ສົ່ງ:</u>

- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານ ະ ການປະເທດ.
- ກົມສັງລວມເສດຖະກິດ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.